ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ຫ້ອງວ່າການແຂວງ ເລກທີ 862/ຫວຂ

ຄໍາມ່ວນ,ວັນທີ 24 ທັນວາ 2021

# ແຈ້ງການ

ຮຽນ: ບັນດາທ່ານຫົວໜ້າພະແນກການ, ຫົວໜ້າອົງການທຽບເທົ່າ, ບັນດາທ່ານເຈົ້າເມືອງ ພະນັກງານ-ລັດຖະກອນ, ກໍາລັງປະກອບອາວຸດ, ນັກຮຽນ, ນັກສຶກສາ, ບັນດາ ບໍລິສັດ, ວິສາຫະກິດ ທັງພາກລັດ ແລະ ເອກະຊົນ ຕະຫຼອດເຖິງ ປະຊາຊົນບັນດາ ເຜົ່າໃນທົ່ວແຂວງ.

ເລື່ອງ: ກ່ຽວກັບວັນພັກຊົດເຊີຍທາງລັດຖະການປີໃໝ່ສາກົນ 2022.

- ອີງຕາມ ຂໍ້ຕົກລົງຂອງເຈົ້າແຂວງໆຄໍາມ່ວນເລກທີ 942/ຈຂ.ຄມ, ລົງວັນທີ 16 ພຶດສະພາ 2018 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງວ່າການແຂວງຄໍາມ່ວນ.
- ອີງຕາມ ແຈ້ງການ ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ສະບັບເລກທີ 1684/ຫສນຍ, ລົງວັນທີ 23 ທັນວາ 2021.

ຫ້ອງວ່າການແຂວງຄໍາມ່ວນ ຂໍຖືເປັນກຽດແຈ້ງທິດຊີ້ນໍາກ່ຽວກັບ ວັນພັກ ຊົດເຊີຍທາງລັດຖະການ ປີໃໝ່ສາກົນ 2022 ມາຍັງບັນດາທ່ານຫົວໜ້າພະແນກ, ອົງການທຽບເທົ່າ ບັນດາທ່ານເຈົ້າເມືອງ, ພະນັກງານ-ລັດຖະກອນ, ກໍາລັງປະກອບອາວຸດ, ນັກຮຽນ, ນັກສຶກສາ, ບັນດາບໍລິສັດ, ວິສາຫະກິດ ທັງພາກລັດ ແລະ ເອກະຊົນ ຕະຫຼອດເຖິງ ປະຊາຊົນບັນດາເຜົ່າໃນທົ່ວແຂວງ ເພື່ອຮັບຊາບດັ່ງນີ້:

1. ເນື່ອງຈາກປີໃໝ່ສາກົນ ວັນທີ 01 ມັງກອນ ປີ 2022 ແມ່ນກົງກັບວັນເສົາ, ສະນັ້ນ ລັດຖະບານ ຈຶ່ງກໍານົດເອົາວັນຈັນ, ວັນທີ 03 ມັງກອນ 2022 ເປັນວັນພັກຊົດເຊີຍທາງລັດພຖະການ ປີໃໝ່ ສາກົນ ປີ 2022.

2. ໃນໄລຍະພັກປີໃໝ່ສາກົນ 2022 ນີ້, ໃຫ້ສືບຕໍ່ປະຕິບັດມາດຕະການ ປ້ອງກັນ, ຄວບຄຸມ, ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ-19 ຕາມແຈ້ງການ ສະບັບເລກທີ 1494/ຫສນຍ, ລົງວັນທີ 14 ພະຈິກ 2021 ຂອງຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ ແລະ ຄໍາສັ່ງຂອງເຈົ້າແຂວງໆຄໍາມ່ວນ, ແຈ້ງການຂອງຄະນະສະເພາະກິດຂັ້ນແຂວງ ວ່າດ້ວຍການສືບຕໍ່ເພີ່ມທະວີຄວາມເຂັ້ມງວດ ໃນການຈັດຕັ້ງປະຕິບັດມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ-19 ຢູ່ແຂວງຄໍາມ່ວນຢ່າງເຂັ້ມງວດ. ໂດຍສະເພາະຫ້າມຈັດງານຊຸມແຊວ, ເຕົ້າໂຮມ ແລະ ຈັດກິດຈະກໍາສ້າງສັນດ້ວຍຮູບການຕ່າງໆ ພ້ອມທັງບໍ່ໃຫ້ອົງການຈັດຕັ້ງພັກ-ລັດ ທຸກຂັ້ນ ຈັດການສະເຫຼີມສະຫຼອງ ຫຼື ອວຍພອນກັນຢ່າງເດັດຂາດ.

ດັ່ງນັ້ນ, ຫ້ອງວ່າການແຂວງ ຈຶ່ງແຈ້ງມາຍັງບັນດາທ່ານຮັບຊາບ ແລະ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ຫົວໜ້າຫ້ອງວ່າການແຂວງ

+ ບ່ອນສົ່ງ:
- ບັນດາພະແນກການ ແລະ ພາກສ່ວນກ່ຽວຂ້ອງ 01ສະບັບ.
- ບັນດາເມືອງ 10 ຕົວເມືອງ 01 ສະບັບ.
- ບັນດາບໍລິສັດ, ລັດວິສາຫະກິດ 01 ສະບັບ.
- ເກັບມ້ຽນສໍານາ.

ແຂວງຄໍາມ່ວນ ຫ້ອງວ່າການ

ພົມຍິນ ຄົນສະໝອນ